


# ອົງກອນການກຸສົລແນວນີ້ກໍ່ມີ ?

ໃນສັງຄົມເຮົາມີອົງກອນການຈັດຕັ້ງທາງສັງຄົມທີ່ບໍ່ຫວັງຜົນກໍາໄລແລະເປັນແບບການກຸສົລ ແລະບໍ່ແມ່ນອົງກອນການກຸສົລ ເຮົາຈະສັງເກດໄດ້ງ່າຍໆນັ້ນກໍ່ຄືອົງກອນການກຸສົລມີສິດທີ່ຈະອອກໃບຮັບເພື່ອນໍາໄປຍົກເວັ້ນພາສີສ່ວນບຸກຄົນໄດ້ ຜູ້ຂຽນຈະຂໍເວົ້າເຖິງອົງກອນການກຸສົລໂດຍສະເພາະໃນຊີວິດປະຈໍາວັນຂອງຄົນເຮົານັ້ນຈະດ້ວຍທາງກົງຫຼືທາງອ້ອມເຮົາຈະມີການພົວພັນຢູ່ກັບສັງຄົມຈະຢູ່ໃນວົງກວ້າງຫຼືວົງແຄບເທົ່ານັ້ນ ທຸກຄົນເປັນຄົນຂອງສັງຄົມແລະກໍ່ຊ່ອຍສັງຄົມຢ່າງບໍ່ມີທາງຫລີກໄດ້.

ຜູ້ຂຽນໄດ້ມີໂອກາດຮູ້ຈັກກັບປະທານອົງກອນການກຸສົນທ່ານນຶ່ງ ຈຸດພິເສດຂອງທ່ານປະທານຄົນ ນີ້ ຄືເປັນຄົນມັກສັນໂດດ, ກິນງ່າຍຢູ່ງ່າຍອຸທິສຊີວິດເພື່ອຊ່ອຍເພືອນມະນຸສເວົ້າສະເພາະແມ່ນເດັກນ້ອຍຜູ້ດ້ອຍໂອກາດ ໃນຂົງເຂດເອເຊັຍຕາເວນອອກສຽງໃຕ້ ຄືໃນປະເທດ ລາວ ແລະ ຂແມນ. ທ່ານເປັນຄົນ ການາດຽນ-ຝຣັ່ງເສດ ມີການສຶກສາສູງເຄີຍເປັນອາຈາຣຍ໌ສອນໃນວິທະຍາໄລແຫ່ງນຶ່ງໃນນະຄອນ ມົງເຣອານ ເປັນເວລາຫລາຍກວ່າ 35 ປີ ແລະຂະນະນີ້ໄດ້ອອກກິນເບັ້ຽບໍານານແລ້ວ. ຈິດໃຈທີ່ເປັນກຸສົລທີ່ຢາກຊ່ອຍເຫລືອເພື່ອນມະນຸສດ້ວຍກັນນັ້ນມີມາແຕ່ດົນນານແລ້ວ ໃນສະໄໝທີ່ທ່ານເປັນອາຈາຣຍ໌ສອນນັ້ນໄດ້ໃຫ້ສິດແກ່ອົງກອນການກຸສົລທາງສາກົນຕັດເອົາເງິນເດືອນຂອງທ່ານເອງແບບໂອໂຕມາຕິກ ເພື່ອການກຸສົລຕລອດລະຍະເວລາທີ່ທ່ານເປັນອາຈາຣຍ໌ຢູ່ນັ້ນເງິນເປັນຈໍານວນຫລາຍພັນຫລຽນທີ່ຖືກຕັດໄປຈາກເງິນເດືອນຂອງທ່ານ ແຕ່ພາຍຫລັງທ່ານໄດ້ມາຊາບຂ່າວວ່າເງິນ ທີ່ທ່ານບໍຣິຈາກທານໂດຽຜ່ານຈາກ ການຕັດເອົາຈາກເງິນເດືອນຂອງທ່ານແບບໂອໂຕມາຕິກນັ້ນບໍ່ໄດ້ໄປຮອດໄປເຖິງຈຸດໝາຍປ່າຍທາງຕາມ ທີ່ທ່ານຕ້ອງການແບບ 100% ຄືເວົ້າໂດຍທົ່ວໄປເງິນທີ່ທານບໍຣິຈາກທານໄປໃຫ້ອົງກອນການກຸສົນໃຫຍ່ຫຼືນ້ອຍກໍ່ຕາມ ເງິນບໍຣິທານຈາກສ່ວນນຶ່ງນັ້ນຈະນໍາໄປໃຊ້ຈ່າຍໃນດ້ານການບໍຣິຫານ ເຊັ່ນ ເງິນເດືອນພະນັກງານ, ຄ່າເຈັ້ຽຄ່າສໍ, ຄ່າເຊົ່າ, ຄ່າເດີນທາງຂອງພະນັກງານ ດັ່ງນີ້ເປັນຕົ້ນ. ເມື່ອໄດ້ອອກມາກິນເບັ້ຽບໍານານແລ້ວ ທ່ານກໍ່ໄດ່ອຸທິສເວລາຂອງທ່ານໃສ່ວຽກງານນີ້ໂດຍສະເພາະເພື່ອເຮັດໃຫ້ຈຸດປະສົງອັນເປັນກຸສົລຂອງທ່ານໃຫ້ໄດ້ຮັບໝາກຜົນຢ່າງເຕັມເມັດເຕັມໜ່ວຍ ຈຶ່ງໄດ້ຈັດຕັ້ງອົງກອນການກຸສົລໜຶ່ງຂຶ້ນແລະກໍ່ໄດ້ລົງທະບຽນເປັນທາງການແລະຮັບຮູ້ຈາກຣັຖບາລການາດາແລະຣັຖບາລແຂວງເກເບກ.

ຜູ້ຂຽນຂໍນໍາທ່ານໄປຮູ້ຈັກກັບອົງກອນການກຸສົລນີ້ແບບລວມໆ ວ່າໄດ້ດໍາເນີນງານມາແບບໃດແລະ ຈະໄປສູ່ຈຸດໝາຍໃດ ຊື່ຂອງອົງກອນນີ້ແມ່ນ ***Association des droits de l'enfance en difficulté et dans la souffrance*** ຫຼືມີຊື່ຍໍ້ວ່າ ***ADEDS*** ອົງກອນນີ້ໄດ້ລົງທະບຽນເມື່ອວັນທີ່ 9 ກັນຍາ 2002 ເມື່ອທ່ານ Mary-Jacque Cambay ໄດ້ອອກກິນເບັ້ຽບໍານານ ແລະກໍ່ໄດ້ໃຊ້ເງິນ ສ່ວນຕົວຂອງທ່ານຫລາຍກວ່າ 35,000 ຫລຽນເພື່ອເລີ່ມລົງມືການກໍ່ສ້າງໂຮງຮຽນໃນປະເທດຂແມນ ໃນນາມຂອງອົງກອນນີ້ ແລະໃນຂະນະນີ້ກໍ່ສໍາເຣັດໄປແລ້ວແລະໂຄງການໃຫຍ່ຕໍ່ໄປແມ່ນເລັ່ງໃສ່ການປຸກໂຮງຮຽນຢູ່ໃນປະເທດລາວແລະປະເທດຂແມນ ເພີ່ມອີກ ຊຶ່ງກໍ່ໄດ້ເດີນທາງໄປລາວແລະຂະແມນເພື່ອ ຊອກຫາສະຖານທີ່ໃນເຂດຍາກຈົນ ປັດຈຸບັນທີ່ຢູ່ໃນປະເທດ ລາວ ໄດ້ເລັງໃສ່ 5 ແຂວງ ກ່ອນ ຄື ໄຊຍະບຸຣີ, ວຽງຈັນ, ຈໍາປາສັກ, ສາລະວັນແລະອັຕຕະປື. ເວົ້າມາຮອດນີ້ຄົງມີຫລາຍຄໍາຖາມທີ່ທຸກຄົນມີຢູ່ໃນໃຈ ເຊັ່ນ ອົງກອນການກຸສົລນີ້ແຕກຕ່າງກັບອົງກອນການກຸສົລອື່ນໆແນວໃດ ສິ່ງທໍາອິດນັ້ນກໍ່ຄືພະນັກງານເຮັດວຽກແບບອາສາສະມັກ 100%, ແລະລາຍຈ່າຍຕ່າງພະນັກງານອາສາສະມັກເປັນຜູ້ຮັບຜິດຊອບຈ່າຍເອງ ບໍ່ໃຫ້ເອົາເງິນທີ່ໄດ້ມາຈາກການບໍຣິຈາກທານຂອງມະຫາຊົນມາໃຊ້ຈ່າຍເພາະເງິນບໍຣິຈາກທານແມ່ນເພື່ອນໍາໄປກໍ່ສ້າງຕາມຈຸດປະສົງຂອງຜູ້ບໍຣິຈາກເທົ່ານັ້ນ ນັບແຕ່ເຈັ້ຽແຜ່ນນຶ່ງຂຶ້ນໄປ, ຄ່າໃຊ້ຈ່າຍໃນການເດີນທາງ, ຄ່າເຊົ່າຫ້ອງການ ແມ້ແຕ່ຄ່າບໍຣິການຂອງທະນາຄານກໍ່ແມ່ນຄະນະບໍຣິຫານອາສາສະມັກເປັນຄົນຈ່າຍ ດັ່ງນັ້ນການຈັດຕັ້ງນີ້ຈຶ່ງກ້າເວົ້າໄດ້ວ່າເງິນບໍຣິຈາກທານຂອງທ່ານໄດ້ນໍາໄປໃຊ້ຈ່າຍຕາມເຈຕນະຣົມຂອງທ່ານ 100% ເຊີນຕິດຕາມລາຍລະອຽດເພີ່ມເຕີມໄດ້ທາງ internet ທີ່ www.adeds.org.